# ຄວາມຮູ້ຮອບຕົວ

ຄົນທຳອິດຂອງໂລກ
ທີ່ໄປເຖິງດວງຈັນ





ສັດໂຕທຳອິດຂອງໂລກ
ທີ່ຂຶ້ນສູ່ອະວະກາດ

# ທຳອິດໃນໂລກ...



ລົດຈັກຄັນທຳອິດຂອງໂລກ



ຄົນທຳອິດເພດນາງໂລກ
ທີ່ຂີ່ລົດຖີບໄປຮອບໂລກ

ຈັນທອນ ທັມມະເທໂວ

# ຄວາມຮູ້ຮອບຕົວ

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

01 JAN 2009

# ທຳອິດໃນໂລກ...

(ເຫຼັ້ມ 1)

ຄັດເລືອກ/ຮີບໂຮມໂດຍ: ຈັນທອນ ທັມມະເທໂວ

ບັນນາທິການໂດຍ : ບຸນຊູ ຜົນທະວີໄຊ

THAMMATHEVO

ນະຄອນຫຼວງວຽງຈັນ, 2008

ທະບຽນພິມ ເລກທີ 160ພຈ 30092008
ພິມທີ່ ພີ ດີ ເອດສ ການພິມ
ຂະໜາດພິມ 14.5cm x 20.5cm
ພິມຄັ້ງທີ 1 ຈຳນວນ 5 000 ເຫຼັ້ມ

ຈັດພິມໂດຍ : ຈັນທອນ ທັມມະເທໂວ

( © ສະຫງວນລິຂະສິດ )

# ຄຳນຳ

ໜັງສືຄວາມຮູ້ຮອບຕົວເຫຼັ້ມນີ້ ໄດ້ຄັດເລືອກ ຮຽບຮຽງມາຈາກເອກະສານອ້າງອີງ ຫຼາຍແຫຼ່ງຂໍ້ມູນທີ່ໃຊ້ເປັນທາງການ ທັງພາຍໃນ ແລະ ຕ່າງປະເທດທີ່ເປັນເອກະສານອ້າງອີງເພື່ອການສຶກສາຄົ້ນຄວ້າ, ຊຶ່ງໄດ້ບັນທຶກຂໍ້ມູນຄວາມຈິງທີ່ເປັນມາໃນອະດີດຂອງມະນຸດ.

ການຄັດຈ້ອນ ຮຽບຮຽງ ໜັງສືເຫຼັ້ມນີ້ຂຶ້ນມາກໍເພື່ອເປັນການສົ່ງເສີມການອ່ານ ແລະ ເພີ່ມຄວາມຮູ້ໃຫ້ແກ່ນັກຮຽນ, ນັກສຶກສາກໍຄືບຸກຄົນທົ່ວໄປທີ່ສົນໃຈໃນການອ່ານໄດ້ຮູ້ເຖິງຂໍ້ມູນຄວາມຈິງ, ທີ່ເປັນມາໃນອະດີດ ທີ່ມະນຸດເຮົາມີຄວາມສາມາດພິເສດ, ສາມາດປະດິດຄິດຄົ້ນສິ່ງຕ່າງໆຂຶ້ນມາເປັນເທື່ອທຳອິດໃນໂລກ ແລະໃຫ້ມະນຸດ ເຮົາໄດ້ນຳໃຊ້ແລະພັດທະນາຈົນມາເຖິງທຸກວັນນີ້ໄດ້ຢ່າງໜ້າງຶດງໍ້ ອັດສະຈັນທີ່ສຸດ.

ໃນການຮິບໂຮມ ແລະ ຮຽບຮຽງປຶ້ມຄວາມຮູ້ຮອບຕົວເຫຼັ້ມນີ້ ອາດມີບາງເນື້ອໃນຍັງບໍ່ທັນຄົບຖ້ວນສົມບູນ ເຊິ່ງເປັນສິ່ງທີ່ປາສະຈາກບໍ່ໄດ້ ຂໍ້ຂາດຕົກ ບົກຜ່ອງດັ່ງກ່າວ.

ດັ່ງນັ້ນ ຜູ້ຮິບໂຮມຫວັງຢ່າງຍິ່ງວ່າ ຈະໄດ້ຮັບການຕຳນິຕິຊົມ ແລະ ຍິນດີຮັບເອົາຂໍ້ມູນເພີ່ມເຕີມ ຈາກທ່ານຜູ້ອ່ານ ເພື່ອນຳໄປປັບປຸງແກ້ໄຂໃຫ້ປຶ້ມເຫຼັ້ມ ນີ້ຄົບຖ້ວນສົມ ບູນຂຶ້ນກວ່າເດີມ.

ວຽງຈັນ, ວັນທີ 07/07/2008

ຜູ້ຮິບໂຮມ:

ຈັນທອນ ທັມມະເທໂວ

# ສາລະບານ


| ລ/ດ | ຊື່ເລື່ອງ | ໜ້າ |
| --- | --- | --- |
| 1 | ຄົນທຳອິດຂອງໂລກທີ່ໄປເຖິງດວງຈັນ | 11-13 |
| 2 | ແມ່ຍິງຄົນທຳອິດຂອງໂລກທີ່ຂຶ້ນສູ່ອາວະກາດ | 14-17 |
| 3 | ຄົນທຳອິດຂອງໂລກທີ່ຂີ່ລົດຖີບໄປຮອບໂລກ | 18-20 |
| 4 | ລົດຖັງຄັນທຳອິດຂອງໂລກ | 21-24 |
| 5 | ຄົນທຳອິດຂອງໂລກທີ່ຂຶ້ນໄປເຖິງຈອມພູເຂົາອີເວເຣດສ | 25-28 |
| 6 | ສັດໂຕທຳອິດຂອງໂລກທີ່ຂຶ້ນສູ່ອະວະກາດ | 29-30 |
| 7 | ນັກກິລາແລ່ນໄວຄົນທຳອິດຂອງໂລກ | 31-33 |
| 8 | ຄົນທຳອິດຂອງໂລກທີ່ລອຍນ້ຳເຢັນໄດ້ໄກກວ່າ ໝູ່ໃນຂົ້ວໂລກເໜືອ | 34-37 |
| 9 | ຜູ້ທີ່ພາຍເຮືອຂ້າມມະຫາສະໝຸດຄົນທຳອິດຂອງໂລກ | 38-40 |
| 10 | ຄົນທຳອິດຂອງໂລກທີ່ດຳນ້ຳເລິກທີ່ສຸດ | 41-42 |
| 11 | ຜູ້ທີ່ໄປເຖິງຈຸດທີ່ເລິກທີ່ສຸດ ຂອງມະຫາສະໝຸດຄົນທຳອິດຂອງໂລກ | 43-44 |
| 12 | ຜູ້ທີ່ລອຍນ້ຳຂ້າມຄອງອັງກິດເປັນຄົນທຳອິດຂອງໂລກ | 45-47 |
| 13 | ແມ່ຍິງຄົນທຳອິດຂອງໂລກທີ່ລອຍນ້ຳຂ້າມຄອງອັງກິດ | 48-49 |
| 14 | ຜູ້ທີ່ໄປເຖິງຂົ້ວໂລກໃຕ້ ເປັນຄົນທຳອິດຂອງໂລກ | 50-52 |
| 15 | ອາຫານກະປ໋ອງທຳອິດຂອງໂລກ | 53-54 |
| 16 | ການນຳໃຊ້ອຸປະກອນເປີດຝາກະປ໋ອງຄັ້ງທຳອິດຂອງໂລກ | 55-56 |
| 17 | ຜູ້ທີ່ຂັບລົດໂອໂຕຂ້າມທະວີບເປັນຄົນທຳອິດຂອງໂລກ | 57-59 |

| | | |
|---|---|---|
| 18 | ຄົນທຳອິດຂອງໂລກທີ່ຄົ້ນພົບດາວຫາງ | 60-63 |
| 19 | ຄົນທຳອິດຂອງໂລກທີ່ຄົ້ນພົບເກາະຟີລິບປິນ | 64-66 |
| 20 | ລົດໄຟຄັນທຳອິດຂອງໂລກແລະການສ້າງທາງລົດໄຟ ຄັ້ງທຳອິດຂອງໂລກ | 67-68 |
| 21 | ຜູ້ປະດິດໂທລະທັດເອເລັກໂຕຼນິກຄັ້ງທຳອິດຂອງໂລກ | 69-70 |
| 22 | ຜູ້ຄົ້ນຄວ້າທິດສະດີການສື່ສານ ແລະ ປະດິດຄອມພິວເຕີເປັນຄົນທຳອິດຂອງໂລກ | 71-72 |
| 23 | ຜູ້ທີ່ຄົ້ນຄວ້າກ່ຽວກັບແສງສະຫວ່າງເປັນຄົນທຳອິດ ຂອງໂລກ | 73-76 |
| 24 | ເຮືອດຳນ້ຳລຳທຳອິດຂອງໂລກທີ່ໃຊ້ພະລັງງານ ນິວເຄຼຍໃນການຂັບເຄື່ອນ | 77-78 |
| 25 | ຜູ້ປະດິດໂທລະສັບແລະຄົ້ນຄວ້າກ່ຽວກັບສຽງເປັນ ຄັ້ງທຳອິດຂອງໂລກ | 79-81 |
| 26 | ລົດຈັກ ຄັນທຳອິດຂອງໂລກ | 82-83 |
| 27 | ລົດຖີບຄັນທຳອິດຂອງໂລກ | 84-85 |
| 28 | ຜູ້ທີ່ໄປເຖິງຂົ້ວໂລກເໜືອເປັນຄົນທຳອິດຂອງໂລກ | 86-88 |
| 29 | ຜູ້ທີ່ຄົ້ນພົບຈຸລັງເນື້ອໄມ້ເປັນຄົນທຳອິດຂອງໂລກ | 89-90 |
| 30 | ແມ່ຍິງ ອາເມລິກາ ຄົນທຳອິດຂອງໂລກທີ່ຂຶ້ນສູ່ ອະວະກາດ | 91-92 |
| 31 | ປະຫວັດຂອງກິລາໂອລິມປິກຄັ້ງທຳອິດຂອງໂລກ | 93-97 |
| 32 | ເອກະສານອ້າງອີງໃນການຄົ້ນຄວ້າ/ຄັດເລືອກ/ຮຽບໂຮມ | 98-99 |



ທ່ານ ນາງ ແອນນິກ “ ລອນດອນເດີຣີ “ ກອບຊິບສະກີ

( Annic “ Londonderry “ Kopchovsky )

ແມ່ຍິງຄົນທຳອິດຂອງໂລກທີ່ຂີ່ລົດຖີບໄປຮອບໂລກ



ທ່ານ ແນວ ອາໍສະຕຼອງ ( Neil Armstrong )

ຜູ້ທີ່ໄປເຖິງດວງຈັນ ແລະ ລົງຢຽບດວງຈັນເປັນຄົນທໍາອິດຂອງໂລກ.



ທ່ານ ຢູຣີ ກາກາຣິນ ( Yuriy Gagarin ) ນັກບິນອະວະ ກາດ ຊາວ ລັດ ເຊຍຄົນທຳ ອິດຂອງໂລກ ທີ່ຂຶ້ນສູ່ອະວະກາດ ດ້ວຍ ຍານ ທີ່ຊື່ ວອດສະ ຕົກ (Vostok 1 ) ເມື່ອວັນທີ 12 ເມສາ ປີ 1961

( ມີຂໍ້ມູນ ຢູ່ ປຶ້ມຄວາມຮູ້ຮອບຕົວ 34 ເລື່ອງ ທີ່ສຸດໃນໂລກ ເຫຼັ້ມ 1 )



ທ່ານ ນາງ ວາເລັນຕີນາ ເຕເຣສະ ໂກວາ ( Valentina Tereshkova ) ຊາວລັດເຊຍ, ແມ່ຍິງຄົນທຳອິດຂອງ ໂລກ ທີ່ບິນຂຶ້ນສູ່ອະວະກາດ ດ້ວຍຍານ ວອດສະຕົກ 6 ( Vostok 6 ) ໃນວັນ ທີ 16 ເດືອນ ມິຖຸນາ ປີ ຄ.ສ. 1963.

## ຄົນທຳອິດຂອງໂລກທີ່ຂຶ້ນໄປເຖິງ
## ຈອມພູເຂົາ ເອເວີເຣດສ ( Everest Peak )



ທ່ານ ເຊີ ເອດມັນ ເພີຊີວານ ຮິນລາຣີ ( Sir Edmund Percival Hillary ) ຊາວ ນິວຊີແລນ ( New Zealand )



ທ່ານ ເຕັງຊິງ ນໍຣເກ (Tengzing Norgay )
ຊາວ ເຊີຣປາ ເນປານ ( Sherpa " Nepal " )



ລີງ ບາເກີ ( Baker ) ເປັນສັດໂຕທຳອິດຂອງໂລກ
ທີ່ຂຶ້ນໄປອະວະກາດດ້ວຍ ເຄື່ອງ ຈູປິເຕີ ໄອອາຣບີເອັມ ເອເອັມ - 18
( Jupiter IRBM AM – 18 ) ໃນປີ ຄ.ສ. 1959



ລົດຖີບຄັນທຳອິດຂອງໂລກ



ລົດຈັກ ຄັນທຳອິດຂອງໂລກ



ລົດຖັງ ມາຣກ I ( Mark I Tank )
ລົດຖັງຄັນທຳອິດຂອງໂລກ



ລົດໄຟ ຄັນທຳອິດຂອງໂລກ
ເປີດ ໃຊ້ ເດີນທາງ ລະຫວ່າງ ລີເວີພູນ ແລະ ແມັນຊິດສະເຕີ
( Liverpool and Manchester )

ທ່ານ ເຊີ ໂຣເກີ ຄິນເບີກ ແບນນິດສະເຕີ ( Sir Roger Gilbert Bannister )
ນັກກິລາແລ່ນໄວ ຄົນທຳອິດຂອງໂລກ








ເຮືອດຳນ້ຳ ຢູເອັສເອັສ ໂນຕິລັສ " ເອັສ ເອັສ ເອນ-571 "
( USS Nautilus " SSN-571 " ) ເປັນເຮືອດຳນ້ຳ ລຳທຳອິດຂອງໂລກ
ທີ່ ໃຊ້ພະລັງງານ ນິວເຄຼຍໃນການຂັບເຄື່ອນ

# ຄົນທຳອິດຂອງໂລກ
# ທີ່ໄປເຖິງດວງຈັນ



ຜູ້ທີ່ໄປເຖິງດວງຈັນ ແລະ ລົງຢຽບດວງຈັນເປັນຄົນທຳອິດຂອງໂລກ ແມ່ນ ທ່ານ ແນວ ອາມສະຕຼອງ ( Neil Armstrong) .

ທ່ານ ແນວ ອາມສະຕຼອງ ( Neil Armstrong ) ເກີດ ເມື່ອວັນທີ 5 ເດືອນ ສິງຫາ ປີ ຄ.ສ.1930 ທີ່ເມືອງ ວາປາໂກເນຕາ ( Wapa koneta ) ລັດ ໂອຮີໂອ ( Ohio ) ສະຫະລັດອາເມລິກາ. ລາວຮຽນຈົບຈາກມະຫາວິທະຍາ ໄລ ພູຣເວີ ( Purdve ) ທີ່ສະຫາລັດອາເມລິກາ.

ທ່ານ ແນວ ອາໍສະຕຼອງ ( Neil Armstrong ) ເປັນນັກບິນອະວະກາດ, ເປັນອາຈານສອນ ຢູ່ທີ່ມະຫາວິທະຍາໄລ, ເປັນນັກບິນທົດລອງ ແລະ ເປັນນັກບິນກອງທັບເຮືອສະຫາລັດອາເມລິກາ. ຍານອະວະກາດທີ່ບິນຄັ້ງທໍາອິດ ແມ່ນຍານ ເຊມິນີ 8 ( Gemini 8 ) ໃນປີ ຄ.ສ. 1966, ເຊິ່ງເປັນຫົວໜ້ານັກບິນ, ລາວເປັນຊ່າງສ້ອມແປງຍານອະວະກາດຄັ້ງທໍາອິດສອງລໍາຮ່ວມກັບນັກບິນ ທີ່ຊື່ ດາວິດ ສະກອດ ( David Scott ) ທີ່ໂຮງສ້ອມແປງຂອງສູນອະວະກາດ.

ການບິນຄັ້ງທີ 2 , ທ່ານ ແນວ ອາໍສະຕຼອງ ( Neil Armstrong ) ແມ່ນເປັນຫົວໜ້າທີມບິນ ອາພອນໂລ 11 ( Apollo 11 ) ທີ່ລົງຢຽບດວງຈັນ ເປັນຄັ້ງທໍາອິດຂອງໂລກ ໃນວັນທີ 20 ເດືອນ ກໍລະກົດ ປີ ຄ.ສ. 1969.

ທ່ານ ແນວ ອາໍສະຕຼອງ ( Neil Armstrong ) ແລະ ເພື່ອນຂອງລາວທີ່ຊື່ວ່າ ບາສ ອານດຼິນ ( Buzz Aldrin ) ແລະ ທ່ານ ມິຊາເອວ ໂຄລິນ ( Michael Collin ) ລົງຈອດພື້ວຂອງດວງຈັນແລະໃຊ້ເວລາໃນການສໍາຫຼວດເປັນເວລາ 2 ຊົ່ວໂມງ ກັບ 30 ນາທີ, ແລະ ໃຊ້ເວລາຢູ່ໃນອະວະກາດທັງໝົດ 8 ວັນ 14 ຊົ່ວໂມງ ແລະ 12 ນາທີ. ທ່ານ ແນວ ອາໍສະຕຼອງ ( Neil Armstrong ) ໄດ້ກາຍເປັນບຸກຄົນສໍາຄັນ ແລະ ມີຊື່ສຽງໄປທົ່ວໂລກ ພ້ອມກັນນັ້ນ ທ່ານກໍໄດ້ຮັບຫຼຽນອະວະກາດທີ່ມີຊື່ສຽງອີກດ້ວຍ.

ທ່ານ ແນວ ອາໍສະຕຼອງ ( Neil Armstrong ) ຮຽນຈົບຈາກມະຫາວິທະຍາໄລ ພູຣເວີ ( Purdve ) ກ່ອນທີ່ຈະເລີ່ມເປັນນັກບິນອະວະກາດ, ລາວໄດ້ເປັນທະຫານເຮືອສະຫາລັດໃນສົງຄາມເກົາຫຼີ. ຫຼັງຈາກສົງຄາມ, ລາວກໍໄດ້ເປັນນັກບິນທົດລອງຂອງ ສູນອະວະກາດແຫ່ງຊາດ ແລະ ໄດ້ບິນຢູ່ທີ່ນັ້ນ ປະມານ 900 ທ່ຽວບິນ.

ນອກຈາກນັ້ນແລ້ວ ທ່ານ ແນວ ອຳສະຕຼອງ ( Neil Armstrong ) ຍັງເປັນຜູ້ວິໄຈກ່ຽວກັບການບິນ ແລະ ຮັບໃຊ້ໃນໂຄງການນັກບິນຫຼາຍໂຄງການ. ປະຈຸບັນ ທ່ານ ແນວ ອຳສະຕຼອງ ( Neil Armstrong ) ແມ່ນໄດ້ຮັບບຳນານແລ້ວ.



ຮູບຖ່າຍຢູ່ໃນ ຍານ ອະວະກາດ ອາພອນໂລ 11 ( Apollo 11 ) ທ່ານ ແນວ ອຳສະຕຼອງ ( Neil Armstrong ) ຄົນທຳອິດນັບຈາກຊ້າຍ , ພ້ອມດ້ວຍເພື່ອນສອງຄົນ ຄື ທ່ານ ມີຊາເອວ ໂຄລິນ ( Michael Collins) ແລະ ທ່ານ ບັສ ອານດຼິນ ( Buzz Aldrin )

---

*Source: http://www.en.wikipedia.org/wiki/Neil_Armstrong ; Wikipedia,, the free encyclopedia*

# ແມ່ຍິງຄົນທຳອິດຂອງໂລກ
# ທີ່ຂຶ້ນສູ່ອະວະກາດ



ທ່ານ ນາງ ວາເລນຕີນາ ເຕເຣສະໂກວາ ( Valentina Tereshkova ) ເກີດເມື່ອວັນທີ 6 ເດືອນ ມີນາ ປີ ຄ.ສ. 1937, ເປັນນັກບິນອະວະກາດແມ່ຍິງ ຊາວລັດ ເຊຍ ຄົນທຳອິດຂອງໂລກ ທີ່ບິນຂຶ້ນສູ່ອະວະກາດ ດ້ວຍຍານ ວອດສະຕົກ 6 ( Vostok 6 ) ໃນວັນທີ 16 ເດືອນ ມິຖຸນາ ປີ ຄ.ສ. 1963.

ທ່ານ ນາງ ວາເລນຕີນາ ເຕເຣສະໂກວາ ( Valentina Tereshkova ) ເກີດທີ່ເມືອງ ໂບນໂຊຍ ມາສເລນນິໂກໂວ ( Bolshoye Maslennikovo ), ເປັນໝູ່ບ້ານນ້ອຍໃນແຄວັນ ຢາໂຣສະລາບ (Yaroslavl) ທາງພາກຕາເວັນ ຕົກຂອງລັດເຊຍ. ຫຼັງຈາກຮຽນຈົບມັດທະຍົມປາຍ, ລາວໄດ້ເຂົ້າເຮັດວຽກທີ່ໂຮງງານຜະລິດຢາງລົດຢູ່ໄລຍະໜຶ່ງ ແລ້ວຈຶ່ງໄດ້ສຶກສາຕໍ່ທາງດ້ານ ວິສະວະກຳ. ຕໍ່ມາ ລາວກໍໄດ້ເປັນນັກໂດດຈ້ອງທີ່ສະໂມສອນການບິນທ້ອງຖິ່ນ, ຊຶ່ງການໂດດຈ້ອງຄັ້ງທຳອິດ ເມື່ອວັນທີ 21 ເດືອນ ພຶດສະພາ ປີ ຄ.ສ. 1959 ແລະ ຕອນ ນັ້ນ ອາຍຸຂອງລາວ ໄດ້ 22 ປີ .

ໃນ ສອງ ປີ ຕໍ່ມາ ລາວກໍໄດ້ຮັບ ການແຕ່ງ ຕັ້ງເປັນເລຂາທິການ ເຍົາວະຊົນຄອມມູນິດ ແລະ ໄດ້ຮັບການຍອມຮັບເຂົ້າ ເປັນສະມາຊິກພັກ ຄອມມູນິດແຫ່ງສະຫະພາບໂຊ ຫວຽດ.

ຫຼັງຈາກທີ່ ຢູຣີ ກາກາຣິນ ( Yuriy Gagarin ) ຂຶ້ນອະວະກາດ ເປັນ ຄົນທຳອິດຂອງ ໂລກ ເມື່ອວັນທີ 12 ເມສາ ປີ ຄ.ສ. 1961, ໃນເວລານັ້ນ ທ່ານ ເຊີເກ ໂກໂຣນຢອບ ( Sergey Korolyov ) ທີ່ເປັນຫົວໜ້າ ຝ່າຍວິສະວະກຳ ໄດ້ມີແນວຄິດທີ່ຈະສົ່ງນັກບິນທີ່ເປັນຜູ້ຍິງ ຂຶ້ນສູ່ອະວະກາດ. ດັ່ງນັ້ນ, ທ່ານ ນາງ ວາເລນຕີນາ ເຕເຣສະໂກວາ ( Valentina Tereshkova ) ຈຶ່ງເປັນຜູ້ໜຶ່ງທີ່ໄດ້ຖືກຄັດເລືອກ ຕິດອັນດັບ 1 ໃນ 5 ຂອງຈຳນວນ 400 ຄົນ. ເນື່ອງຈາກວ່າ ລາວສາມາດໂດດຈ້ອງໄດ້, ເປັນຜູ້ຍິງທີ່ມີອາຍຸນ້ອຍກວ່າ 30 ປີ ແລະ ມີນ້ຳໜັກ 70 ກິໂລກຼາມ. ຫຼັງຈາກນັ້ນມາ, ລາວກໍໄດ້ຝຶກແອບຢ່າງໜັກ

ໜ່ວງ, ຊຶ່ງຕ້ອງໄດ້ຝຶກເປັນນັກບິນໄອພົ່ນ ແລະ ຕ້ອງໂດດຈ້ອງ 120 ຄັ້ງ.

ການຂຶ້ນສູ່ອະວະກາດຂອງລາວ ແມ່ນປະສົບຜົນສຳເລັດ, ຊຶ່ງໄດ້ໂຄຈອນ ອ້ອມໂລກ 48 ຮອບ ເປັນເວລາ 2 ວັນ 22 ຊົ່ວໂມງ 50 ນາທີ ( 2 d 22 h 50 ' ). ນອກຈາກນັ້ນ, ທ່ານ ນາງ ວາເລນຕີນາ ເຕເຣສະໂກວາ ( Valentina Tereshkova ) ຍັງເປັນນັກບິນພົນລະ ເຮືອນຄົນທຳ ອິດຂອງໂລກອີກ ດ້ວຍ.

ໂຄງການ ນັກບິນອະວະກາດໄດ້ມີຂຶ້ນຢ່າງຕໍ່ເນື່ອງ, ຊຶ່ງກໍໃຊ້ເວລານານ ເຖິງ 19 ປີ ຈຶ່ງໄດ້ສົ່ງນັກບິນອະວະກາດຜູ້ຍິງຄົນທີ 2 ຂຶ້ນໄປຍັງອະວະກາດອີກ.

ນັກບິນອະວະກາດ ຜູ້ຍິງຄົນທີ 2 ນີ້ມີ ຊື່ວ່າ ທ່ານ ນາງ ສະເວດລານາ ເຢບເຢນີເອບນາ ຊາວິສກາຢາ ( Svetlana Yevgenyevna Savitskaya ) ເກີດ ເມື່ອວັນທີ 8 ເດືອນ ສິງຫາ ປີ ຄ.ສ. 1948 ທີ່ມົດສະກູ ປະເທດ ລັດເຊຍ.

ທ່ານ ນາງ ສະເວດ ລານາ ເຢບເຢນີເອບນາ ຊາວິສກາຢາ ( Svetlana Yevgenyevna Savitskaya ) ເປັນຜູ້ຍິງຊາວລັດເຊຍຄົນທີ 2 ຂອງໂລກ ທີ່ ໄດ້ຖືກຄັດເລືອກເປັນ ນັກບິນອາວະກາດ ໃນປີ ຄ.ສ. 1980, ແລະ ໃນວັນທີ 19 ເດືອນ ສິງຫາ ປີ ຄ.ສ. 1982 ລາວໄດ້ບິນຂຶ້ນສູ່ອະວະກາດ ດ້ວຍຍານ ທີ່ມີຊື່ວ່າ ໂຊຢຸສ ທີ - 7 ( Soyuz T- 7 ) ແລະ ເປັນຜູ້ຍິງຄົນອຳທິດຂອງໂລກ ທີ່ຍ່າງໃນອະວະກາດໃຊ້ເວລາ 3 ຊົ່ວ ໂມງ 35 ນາທີ ແລະ ໃຊ້ເວລາ ຢູ່ໃນອະວະກາດ 19 ວັນ 17 ຊົ່ວໂມງ 6 ນາທີ.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ